ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ສູນກາງ ຊປປລ ຈັດກອງປະຊຸມສໍາມະນາວິທະຍາສາດ






ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ (ຊປປລ) ຮ່ວມກັບ ທະນາຄານແຫ່ງ ສປປ ລາວ (ທຫລ) ແລະ ກະຊວງແຜນການ ແລະ ການລົງທຶນ (ຜທ) ໄດ້ຈັດສໍາມະນາວິທະຍາສາດພາຍໃຕ້ຫົວຂໍ້: "ຂັ້ນຕອນການເຂົ້າເຖິງສິນເຊື່ອ SME ແລະ ການພັດທະນາເສດຖະກິດ-ສັງຄົມ" ໃນຕອນບ່າຍຂອງວັນທີ 14 ທັນວາ 2018 ທີ່ສະໂມສອນສະຖາບັນການທະນາຄານ. ໂດຍການໃຫ້ກຽດເປັນປະທານຂອງສະຫາຍ ອາລຸນໄຊ ສູນນະລາດ, ກໍາມະການສໍາຮອງສູນກາງພັກ, ເລຂາຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ. ພ້ອມດ້ວຍການເຂົ້າຮ່ວມຂອງບັນດາຄະນະບໍລິຫານງານຊາວໜຸ່ມປະຕິວັດລາວ, ກະຊວງ, ອົງການອ້ອມຂ້າງສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ແລະ ສະມາຊິກຊາວໜຸ່ມຫຼາຍກວ່າ 500 ສະຫາຍ.

ການສໍາມະນາວິທະຍາສາດໃນຄັ້ງນີ້ເປັນການສ້າງຂະບວນການເພື່ອຂໍ່ານັບຮັບຕ້ອນກອງປະຊຸມໃຫຍ່ຂອງຄະນະບໍລິຫານງານສູນກາງ ຊປປລ ພ້ອມທັງເປັນການພົບປະແລກປ່ຽນບົດຮຽນດ້ານວິທະຍາສາດເພື່ອສ້າງຄວາມເຂົ້າໃຈຕໍ່ທິດທາງແຜນການພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ ແລະ ຂັ້ນຕອນການເຂົ້າເຖິງສິນເຊື່ອສໍາລັບວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ. ໂດຍໃນພາກຂັ້ນຕອນການເຂົ້າເຖິງສິນເຊື່ອແມ່ນການບັນຍາຍຈາກສະຫາຍ ແສງຈັນ ພັນມີໄຊ, ຮອງຫົວໜ້າທະນາຄານພັດທະນາລາວ ສາຂານະຄອນຫຼວງ, ຄະນະບໍລິຫານງານຊາວໜຸ່ມ ທຫລ, ໂດຍສະຫາຍໄດ້ນໍາສະເໜີດ້ານລະບຽບການ ແລະ ຂັ້ນຕອນໃນການເຂົ້າເຖິງແຫຼ່ງທຶນຂອງບັນດາວິສາຫະກິດຂະໜາດນ້ອຍ ແລະ ກາງຂອງທະນາຄານດັ່ງກ່າວໃນ ສປປ ລາວ ແລະ ໃນພາກແຜນການພັດທະນາເສດຖະກິດ-ສັງຄົມ ເຊິ່ງເປັນການບັນຍາຍຈາກຜູ້ຕາງໜ້າຊາວໜຸ່ມກະຊວງແຜນການ ແລະ ການລົງທຶນ.




ໃນໂອກາດນີ້ສະຫາຍເລຂາຄະນະບໍລິຫານງານ ຊປປລ ຍັງໄດ້ເນັ້ນໃຫ້ສະມາຊິກຊາວໜຸ່ມທຸກສະຫາຍ ຈົ່ງກຳໄດ້ 5 ພາລະບົດບາດ ແລະ 13 ສິດ ແລະ ໜ້າທີ່ ຂອງຄະນະບໍລິຫານງານ ຊປປລ ຕາມກົດໝາຍວ່າດ້ວຍຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດສິດ ແລະ ໜ້າທີ່ຂອງສະມາຊິກຊາວໜຸ່ມປະຊາຊົນປະຕິວັດລາວໃນຂະແໜງການເສດຖະກິດ ແລະ ພ້ອມກັນຍົກສູງຄວາມຮັບຜິດຊອບຂອງຕົນເອງ ເພື່ອເປັນກຳລັງໃຫ້ແກ່ພັກປະຊາຊົນປະຕິວັດລາວ ໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**# ຂ່າວ-ພາບ: ວັນປະເສີດ ສິມບູນຂັນ.**